# ຊູແອັດໃຫ້ການຊ່ວຍເຫລືອແກ່ຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງລາວ




ໂດຍຕອບສະໜອງຄຳເຊີນຂອງ ກະຊວງການຕ່າງປະເທດຊູແອດ, ຄະນະຜູ້ແທນຂັ້ນສູງຂອງ ຄະນະກຳມາທິກາແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ (ຄ.ຊ.ກ.ມ) ຈຳນວນ 7 ທ່ານ ນຳໂດຍ ທ່ານ ສົມສະຫວາດ ເລັ່ງສະຫວັດ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການ ກະຊວງການຕ່າງປະເທດ, ທັງເປັນ ປະທານ ຄ.ຊ.ກ.ມ ໄດ້ໄປຢ້ຽມຢາມທັດສະນະສຶກສາຢູ່ປະເທດຊູແອດແຕ່ວັນທີ 812 ພຶດສະພາ 2006.ໃນການຢ້ຽມຢາມຄັ້ງນີ້, ຄະນະຜູ້ແທນ ຄ.ຊ.ກ.ມ ໄດ້ຢ້ຽມຢາມສະພາແຫ່ງຊາດຊູແອດ ໂດຍໄດ້ພົບປະກັບທ່ານ ເປີ ເວສເຕີເບີກ (Per Westerberg) ຮອງປະທານ ສະພາຜູ້ທີ 1 ແລະ ທ່ານ ນາງ ເຣລານາ ຮອຍ, ຮອງປະທານສະພາ ຜູ້ທີ 2 ພ້ອມດ້ວຍບັນດາຫົວໜ້າກຳມາທິ ການ ຂອງສະພາແຫ່ງຊາດ ທີ່ພົວພັນເຖິງການສົ່ງເສີມແມ່ຍິງເຂົ້າໃນເວທີການເມືອງ. ຄະນະຜູ້ແທນ ຄ.ຊ.ກ.ມ ຍັງໄດ້ພົບປະກັບ ບັນດາລັດຖະມົນ ຕີຊ່ວຍ ວ່າການກະຊວງການຕ່າງປະເທດຊູແອດ ແລະ ອົງການຊີດາ (SIDA) ເຊິ່ງໃນໂອກາດນີ້ໄດ້ມີການແລກປ່ຽນຄວາມຄິດ ຄວາມເຫັນກ່ຽວກັບການພົວພັນຮ່ວມມືລະຫວ່າງ ລາວຊູແອດ ເພື່ອການພັດທະນາກໍ່ ໍ່ຄືບັນຫາສາກົນທີ່ຕ່າງຝ່າຍຕ່າງມີຄວາມສົນໃຈ. ຝ່າຍລາວໄດ້ສະແດງຄວາມຮູ້ບຸນຄຸນຕໍ່ການຊ່ວຍເຫຼືອອັນລ້ຳຄ່າ ຂອງຊູແອດ ແກ່ການພັດທະນາເສດຖະກິດສັງຄົມ ຂອງ ສ ປ ປລາວ ໃນຫຼາຍສິບປີທີ່ຜ່ານມາ, ສ່ວນຝ່າຍຊູແອດໄດ້ຢືນ ຢັນການສືບຕໍ່ໃຫ້ການຊ່ວຍເຫຼືອດ້ານທຶນຮອນ ແລະ ເຕັກນິກວິຊາການແກ່ ສ ປ ປ ລາວ, ລວມທັງໃນບາງກິດຈະກຳວຽກງານດ້ານຄວາມສະເໝີພາບຍິງ ຊາຍ ແລະ ສິດທິຂອງແມ່ຍິງ. ພ້ອມກັນນີ້ຄະນະຜູ້ແທນຍັງໄດ້ຢ້ຽມຢາມຖອດຖອນບົດຮຽນກັບຫຼາຍ ອົງການຂອງພາກລັດ ແລະ ພາກເອກະຊົນຂອງຊູແອດກ່ຽວກັບການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງເຊັ່ນ: ກະຊວງເພື່ອຄວາມສະເໝີພາບດ້ານບົດບາດຍິງຊາຍ; ອົງການກວດການສອບດ້ານສິດທິຂອງເດັກ ແລະ ເຍົາວະຊົນ; ສະຫະພັນກຳມະບານຊູແອດ; ອົງການກວດສອບດ້ານສິດສະເໝີພາບຍິງຊາຍ ທາງດ້ານໂອກາດ; ກະຊວງອຸດສາຫະກຳ; ສະຫະພັນວິສາຫະກິດຂອງຊູແອດ ແລະ ຄະນະກຳມະການສົ່ງເສີມຄວາມສະເໝີພາບບົດບາດຍິງຊາຍ ຂອງ ເມືອງໂຊນາ (Solna).ຜ່ານການຢ້ຽມຢາມຖອດຖອນບົດຮຽນໃນຄັ້ງນີ້, ຄະນະ

ຜູ້ແທນ ຄ.ຊ.ກ.ມ ສາມາດບັນລຸ ຈຸດປະສົ່ງລະດັບຄາດໝາຍທີ່ໄດ້ວາງອອກເປັນຢ່າງດີ ເຊິ່ງສາມາດຖອດຖອນໄດ້ບົດຮຽນໃນ ບາງຈຸດດັ່ງລຸ່ມນີ້:1.ອີງການນິຕິບັນຍັດໄດ້ມີການສ້າງລະບົບກົດໝາຍ ແລະ ການຕິດຕາມການຈັດ ຕັ້ງປະຕິບັດກົດ ໝາຍຢ່າງເຂັ້ມງວດໃນການຄໍ້າປະກັນສິດສະເໝີພາບຍິງຊາຍ;2.ລັດຖະບານ ໄດ້ສ້າງນະໂຍບາຍແຫ່ງຊາດ ເພື່ອສົ່ງເສີມ ຄວາມສະເໝີພາບຍິງຊາຍ ກໍຄືຄວາມ ກ້າວໜ້າຂອງແມ່ຍິງ ຊູແອດ, ເຮັດໃຫ້ວຽກງານຄວາມສະເໝີພາບ ຍິງ ຊາຍ ຈະຕ້ອງໄດ້ເຊື່ອມສານ ສອດທ້ອຍເຂົ້າໃນທຸກຂົງເຂດວຽກງານ. ບັນດາຂະ ແໜງການ ແລະ ທ້ອງຖິ່ນ ຕ້ອງໄດ້ຜັນຂະຫຍາຍ ນະໂຍບາຍດັ່ງກ່າວ ເຂົ້າໃນແຜນ ການວຽກງານປະຈໍາປີຂອງຕົນ. ພ້ອມກັນນັ້ນ, ກໍໄດ້ມີນະໂຍບາຍດ້ານ ສະຫວັດດີການຢ່າງຄົບຊຸດເພື່ອອໍານວຍຄວາມສະດວກໃຫ້ແມ່ຍິງເຂົ້າຮ່ວມໃນວຽກງານລວມຂອງ ຊາດ.3.ເພື່ອໃຫ້ມີກົນໄກການຈັດຕັ້ງປະຕິບັດລະບົບກົດໝາຍ ແລະ ນະໂຍບາຍ ຂອງລັດຖະບານໃນການສົ່ງເສີມຄວາມ ສະເໝີພາບ ຍິງຊາຍ ໃຫ້ໄດ້ຮັບຜົນດີ, ລັດຖະບານ ໄດ້ ສ້າງຕັ້ງ ກະຊວງໜຶ່ງຮັບຜິດຊອບສະເພາະຕໍ່ວຽກງານດັ່ງກ່າວ (Ministry of Gender Equality), ນອກນັ້ນ ຍັງມີຫ້ອງການຕິດຕາມກວດ ກາຂອງ ລັດຖະບານຕໍ່ວຽກງານສົ່ງເສີມຄວາມສະເໝີພາບ ຍິງຊາຍ (Equal Opportunities Ombudsman). ພ້ອມນັ້ນ, ທຸກກະຊວງ ແລະ ທ້ອງຖິ່ນຕ້ອງມີພາກສ່ວນໜຶ່ງ ຮັບຜິດຊອບ ໂດຍກົງຕໍ່ວຽກງານສົ່ງເສີມຄວາມສະເໝີພາບຍິງຊາຍ.ຍ້ອນມີກົນໄກເພື່ອສົ່ງເສີມຄວາມສະເໝີພາບຍິງຊາຍຢ່າງເປັນ ລະບົບຄົບຊຸດດັ່ງກ່າວມາຂ້າງເທິງນັ້ນຈຶ່ງໄດ້ຊຸກຍູ້ໃຫ້ແມ່ຍິງຊູແອດເຂົ້າຮ່ວມໃນການສ້າງສາພັດທະນາຂອງຊາດໃນລະດັບສູງເຊິ່ງສະແດງ ອອກໃນຕົວຈິງ ຄືອັດຕາສ່ວນຂອງ ລັດຖະບານທຸກຂັ້ນ ກໍກວມອັດຕາສ່ວນສູງ ເຊັ່ນດຽວກັນ.4.ການສ້າງຕັ້ງ ແລະ ການປຸກລະດົມເຕືອຄ່າຍຂອງຜູ້ຊາຍ ຕໍ່ສູ້ເພື່ອສິດທິຂອງແມ່ຍິງ ກໍຄືການ ປ່ຽນແປງຄວາມຮັບຮູ້ແບບເກົ່າ ດັ້ງເດີມຂອງ ຜູ້ຊາຍ ທີ່ມີຕໍ່ແມ່ຍິງໃນຄອບ ຄົວ ແລະ ໃນສັງຄົມເປັນ ຕົ້ນແມ່ນແນວຄິດໃນການຊື້ບໍລິການທາງເພດ; ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນຄອບຄົວ; ການຄ້າ ແມ່ຍິງ ແລະ ເດັກນ້ອຍ.ການຢ້ຽມຢາມຖອດຖອນບົດຮຽນ ຂອງຄະນະຜູ້ແທນ ຄ.ຊ.ກ.ມ ໃນຄັ້ງນີ້ ໄດ້ດໍາເນີນໄປດ້ວຍບັນຍາກາດອັນອົບອຸ່ນ ແລະ ເຂົ້າອົກເຂົ້າໃຈເຊິ່ງກັນ ແລະ ກັນ, ທັງເປັນການປະ ກອບສ່ວນ ເຂົ້າ ໃນການເສີມ ຂະຫຍາຍສາຍພົວພັນຮ່ວມມືທີ່ດີ ລະ ຫວ່າງ 2 ຊາດ ລາວຊູແອດ ຂຶ້ນສູ່ບາດກ້າວໃໝ່.

## ຜູ້ນໍາເຮົາ ຕ້ອນຮັບທູດປະເທດເພື່ອນມິດ

ຂໍ້ມູນຈາກ ນ.ສ.ພ ວຽງຈັນໃໝ່ - 24 ພຶດສະພາ 2006 10:17 ນ.



ໃນຕອນເຊົ້າຂອງວັນທີ 23 ພຶດສະພາ 2006 ທີ່ສຳນັກງານປະທານປະເທດ (ຫໍຄຳ) ພະນະທ່ານ ຈູມມະລີ ໄຊຍະສອນ ຮອງປະທານປະເທດ ແຫ່ງ ສປປ ລາວ ໄດ້ໃຫ້ການຕ້ອນຮັບການເຂົ້າຍື່ນສານຕາຕັ້ງຂອງພະນະທ່ານ Kjell Magne Storlk Ken ເພື່ອດຳລົງໜ້າທີ່ເປັນເອກອັກຄະລາຊະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ລາຊະອານາຈັກນໍເວ ຄົນໃຫມ່ ປະຈຳລາວ.

ໂອກາດນີ້ ທັງສອງຝ່າຍກໍໄດ້ພົບປະກັນດ້ວຍບັນຍາກາດອັນອົບອຸ່ນ ເຊິ່ງຕ່າງຝ່າຍຕ່າງກໍໄດ້ຍົກໃຫ້ເຫັນສາຍພົວພັນຮ່ວມມືຊ່ວຍເຫລືອເຊິ່ງກັນ ແລະ ກັນ ໃນໄລຍະຜ່ານມາ ພ້ອມນີ້ກໍໄດ້ແຈ້ງໃຫ້ຮູ້ເຖີງສະພາບການພັດທະນາເສດຖະກິດ-ສັງຄົມ ແລະ ແຜນການໃນຕໍ່ຫນ້າ ຂອງ ສປປ ລາວ ໂດຍສະເພາະ ສິ່ງທີ່ເປັນທ່າແຮງບົ່ມຊ້ອນຂອງລາວ ຊຶ່ງໄລຍະຜ່ານມາກໍໄດ້ມີນັກທຸລະກິດນໍເວມາລົງທຶນຢູ່ລາວຫລາຍຂື້ນເຊັ່ນດຽວກັນ ທາງທ່ານທູດກໍໄດ້ແຈ້ງໃຫ້ຊາບວ່າໃນມໍ່ໆນີ້ ທາງນໍເວ ກໍຈະໄດ້ມີການປຶກສາຫາລື ແລະນຳໄປສູ່ການເຊັນສັນຍາການຂະຫຍາຍຕາຫນ່າງໄຟຟ້າໄປສູ່ຊົນນະບົດ ແລະຫວັງວ່າການມາຮັບຕຳແຫນ່ງໃຫມ່ຄັ້ງນີ້ ຈະເປັນການສືບຕໍ່ເສີມຂະຫຍາຍສາຍພົວພັນຮ່ວມມືລະຫວ່າງ 2 ປະເທດໃຫ້ນັບມື້ນັບດີຂື້ນເປັນກ້າວໆ.

ຕໍ່ມາຕອນບ່າຍຂອງວັນດຽວກັນນີ້ ທີ່ສຳນັກງານນາຍົກລັດຖະມົນຕີ ທ່ານ ບຸນຍັງ ວໍລະຈິດ ນາຍົກລັດຖະມົນຕີ ແຫ່ງສປປ ລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ Kjell Magne Storlk Ken ເນື່ອງໃນໂອກາດເດີນທາງມາຍື່ນສານຕາຕັ້ງ ເພື່ອດຳລົງຕຳແຫນ່ງເປັນເອກອັກຄະລາຊະທູດນໍເວ ຄົນໃຫມ່ ປະຈຳ ສປປ ລາວ ເຊິ່ງມີສຳນັກງານໃຫຍ່ຕັ້ງຢູ່ຮາໂນ້ຍສ.ສ ຫວຽດນາມ ແລະ ທ່ານ Arno Riedep ເອກອັກຄະລັດຖະທູດໂອຕຼິດ ປະຈຳ ສປປ ລາວ ເຊິ່ງມີສຳນັກງານຕັ້ງຢູ່ບາງກອກ (ປະເທດໄທ) ເນື່ອງໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ໃນວັນທີ 23 ພຶດສະພານີ້ ເພື່ອປຶກສາຫາລືກ່ຽວກັບເຄື່ອງມືການກະສິກຳຊ່ວຍເຫລືອ ສປປ ລາວ ຈາກລັດຖະບານປະເທດໂອຕຼິດ ອີກດ້ວຍ.